# The Baptist Tabernacle of Los Angeles

1329 South Hope Street, L.A. Civic Center

Mailing Address:
P. O. Box 15308
Los Angeles, CA 90015
Phone: (213) 744-9999
E-mail: rlhymersjr@sbcglobal.net
www.sermonsfortheworld.com
www.baptisttabernacle.com




Dr. R. L. Hymers, Jr.
Senior Pastor

Dr. Christopher L. Cagan
Associate Pastor

Dr. Kreighton L. Chan
Assistant Pastor

ທັນວາ 2016

ເພື່ອນທີ່ຮັກ:

ເຫດການຫຼັກໆທີ່ເກີດຂື້ນໃນຄຣິສຕະຈັກຂອງພວກເຮົາໃນປີນີ້ກໍ່ຄືການຟື້ນຟູທີ່ພຣະເຈົ້າໄດ້ສົ່ງມາໃຫ້ພວກເຮົາໃນທາງບູຮານ,ຂ້າພະເຈົ້າກັບຄອບຄົວໄດ້ໄປທ່ຽວຢູ່ເມືອງແຄນຄັນປະເທດແມັກຊິກໂກ,ຂ້າພະເຈົ້າໄດ້ໃຊ້ເວລາມື້ໜຶ່ງຢູ່ໃຕ້ຕາເວັນ ແລະ ໃນຫ້ອງນອນຢູ່ໂຮງແຮມອ່ານໜັງສືເຫຼັ້ມໜຶ່ງກ່ຽວກັບການຟື້ນຟູຢູ່ເກາະລູອິສແຄມຝັ່ງທະເລທາງເໜືອຂອງປະເທດສະກັອດແລນເຊິ່ງປາກົດຂື້ນໃນລະຫວ່າງປີ 1949-1953, ຈິດວິນຍານຂອງຂ້າພະເຈົ້າໄດ້ຟື້ນຟູຂື້ນໃນຂະນະທີ່ອ່ານປື້ມນັ້ນ, ຂ້າພະເຈົ້າຈຶ່ງເລີ່ມອະທິຖານຢ່າງໜັກເພື່ອຂໍໃຫ້ພຣະເຈົ້າສົ່ງການຟື້ນຟູມາສູ່ຄຣິສຕະຈັກຂອງເຮົາ, ເມື່ອພວກເຮົາກັບມາຂ້າພະເຈົ້າກໍໄດ້ເທດສະໜາເປັນເວລາສາມມື້ແລະກໍມີພວກຄົນໜຸ່ມທີ່ຫວັງວ່າໄດ້ຮັບຄວາມລອດ, ແຕ່ການຟື້ນຟູໃຫຍ່ໄດ້ເກີດຂື້ນທັນທີຊ່ວງຊຳເນີ, ມັນເປັນວັນພະຫັດວັນທີ 27 ເດືອນສິງຫາ, ຂ້າພະເຈົ້າໄດ້ຂໍໃຫ້ພວກຄົນໜຸ່ມທ່ອງຈຳອິດສະຢາ 64:1-3 “ໂອຖ້າຫາກວ່າພຣະອົງຈະຊີງແຫວກຟ້າສະຫວັນສະເດັດລົງມາໄດ້ໜໍ…”(ອິດສະຢາ 64:1) ມີຄົນໜຸ່ມສາມຄົນທ່ອງຈຳຂໍ້ພຣະຄຳພີພວກນັ້ນ, ທັນໃນນັ້ນກໍມີຊາຍໜຸ່ມຄົນໜຶ່ງໂດດອອກແລ້ວຮ້ອງສຽງດັງວ່າ“ຂ້ອຍເປັນຄົນຫຼົງຫາຍໆ”ລາວໄດ້ຄຸເຂົ່າລົງທັນໃຈທອບແລ້ວຮ້ອງໄຫ້,ມັນເບິ່ງຄືກັບຜິດບ່ອນເພາະໃນຄືນນັ້ນບໍ່ມີຫຍັງສະເທືອນອາລົມເລີຍ,ບໍ່ມີແມ່ນແຕ່ຮ້ອງເພງ, ໃນການນະມັດສະການສອງສາມເທື່ອຂອງເດືອນມັງກອນແລະເດືອນສິງຫາພຣະເຈົ້າໄດ້ລົງມາແລະຄົນໜຸ່ມ 22 ຄົນໄດ້ຮັບຄວາມລອດແລະອີກ 14 ຄົນໄດ້ຮັບການຟື້ນຟູໃໝ່ໂດຍການປະກອບດ້ວຍພຣະວິນຍານ, ຂ້າພະເຈົ້າໄດ້ເຫັນການຟື້ນຟູສາມແຫ່ງຢູ່ເມືອງອື່ນໆມາແລ້ວ,ຄ່ອນຂ້າງຈະມີລິດແລະບໍ່ທຳມະດາ,ປະຈຸບັນນີ້ຂ້າພະເຈົ້າບໍ່ເຫັນຢູ່ໃສມີແບບນີ້ແລ້ວ,ແຕ່ການຟື້ນຟູອັນນີ້ແມ່ນອັນທຳອິດທີ່ພຣະເຈົ້າສົ່ງມາຄຣິສຕະຈັກຂອງພວກເຮົາໃນ 42 ປີ,ພວກເຮົາໄດ້ອະທິຖານຂໍການຖອກເທລົງມາຂອງພຣະວິນຍານຂອງພຣະເຈົ້າແລະສຸດທ້າຍພວກເຮົາກໍໄດ້ຮັບຄຳຕອບ, ແຕ່ໃນສອງສາມຄືນນັ້ນຢ່າງໜ້ອຍມີ 36 ຄົນໄດ້ມາພາຍໃຕ້ການສຳນຶກບາບແລະ 22 ຄົນໃນນັ້ນໄດ້ຮັບຄວາມລອດ-ສ່ວນອີກ 14 ຄົນໄດ້ຮັບການຟື້ນຟູແລະຟື້ນຄືນໃໝ່ຈາກສະພາບການຖອຍຫຼັງ,ເລື່ອງນີ້ເກີດຂື້ນໃນຂະນະທີ່ຂ້າພະເຈົ້າສືບຕໍ່ເທດຊ້ຳຄືນຢູ່ໃນອິດສະຢາ 64:1-3 ແຕ່ລະຄືນຜູ້ຄົນພາກັນຮ້ອງເພງຫົວຂໍ້ຫຼັກແຫ່ງການຟື້ນຟູຮ້ອງແລ້ວຮ້ອງອີກ,“ພຣະຜູ້ຊ່ວຍຂໍຊົງຕື່ມເຕັມນິ ມິດທຸກອັນຂອງຂ້າຂໍໃຫ້ຂ້າເຫັນພຽງແຕ່ພຣະເຢຊູໃນມື້ນີ້,ເຖິງແມ່ນຜ່ານທາງຮ່ອມພູພຣະອົງຊົງນຳຂ້າ ແສງລາສີ ຂອງພຣະອົງຊົງຜ່ານຂ້າພຣະເຈົ້າພຣະຜູ້ຊ່ວຍຂໍໂຜດຕື່ມເຕັມທຸກນິມິດຂອງຂ້າ ຈົ່ນສະຫງ່າລາສີຂອງພຣະອົງເຮັດ ໃຫ້ວິນຍານຂ້າພະອົງສ່ອງແສງຂໍໂຜດຕື່ມເຕັມທຸກນິມິດຂອງຂ້າເພື່ອທຸກຄົນຈະໄດ້ເຫັນພຣະລັກສະນະທີ່ບໍລິສຸດ ຂອງພຣະອົງສະທ້ອນຢູ່ໃນຂ້າ ” (ຂໍໂຜດຕື່ມເຕັມທຸກນິມິດຂອງຂ້າ ໂດຍເອວິສຄຣິສຕຽນເຊັນ 1895-1985) ສອງສາມເທື່ອຢູ່ໃນການຟື້ນຟູພະຍາມານໄດ້ມາຄືກັບໂຕສິງຮ້ອງແຜດສຽງ ແຕ່ທຸກເທື່ອພວກເຮົາກໍໄດ້ອະທິຖານໃຫ້ມັນ

ຖອຍແລະພຣະວິນຍານຂອງພຣະເຈົ້າກໍກັບມາຊັກນໍາຜູ້ຄົນມາຫາພຣະຄຣິດ, ປະມານສອງສາມມື້ທີ່ພວກເຮົາປະສົບກັບການມີຊີວິດຂອງຊາວຄຣິສຕຽນແລະຄົນທີ່ຢູ່ບ່ອນນັ້ນຈະບໍ່ມີມື້ລືມຕາບໃດທີ່ເຂົາເຈົ້າຍັງມີຊີວິດຢູ່, ໃນຖ້າມກາງການຟື້ນຟູນີ້ມີຊາຍໜຸ່ມສອງຄົນທີ່ໄດ້ອຸທິດຊີວິດທີ່ຈະເທດສະໜາ, ໜຶ່ງໃນນັ້ນແມ່ນລູກຊາຍຂອງຄົນແປພາສາຈີນຂອງເຮົາໂນອາຊອງ, ອີກຄົນໜຶ່ງແມ່ນລູກຊາຍຂອງອາຍຸ 23 ປີຂອງດຣ.ເຄແກນຊື່ຈອນຊາມູເອວເຄແກນເຊິ່ງຫາກໍຈົບປະລິນຍາຕີສາຂາອາຍາຍຸດຕິທໍາຈາກໂຮງຮຽນແອວເອລັດຄາລິຟໍເນຍ,ທັງສອງຄົນລ້ວນແລ້ວແຕ່ເປັນນັກເທດທີ່ມີຈຸດຢືນ, ຕອນທີ່ຈອນເທດສະໜາຄັ້ງທໍາອິດຟັງເບິ່ງຄືກັບວ່າລາວເຄີຍເທດສະໜາມາແລ້ວເປັນເວລາຫຼາຍກວ່າຊາວປີແລະໂນອາຈັບເອົາຫົວຂໍ້ຂອງເພງເທດສະໜາໜັກໜ່ວງແລ້ວຮ້ອງເພງແລະກັບໄປເທດສະໜາຕາມສະຕາຍຂອງດຣ.ຈອນຊວງແລະດຣ.ຈອນອາໄຣສ໌,ເຫຼືອເຊື່ອອີຫຼີ! ຂອບຄຸນພຣະເຈົ້າສໍາຫຼັບຊາຍໜຸ່ມເຫຼົ່ານີ້, ຈອນຈະໄປຮຽນສາສະໜາສາດທັລບອດທີ່ມະຫາວິທະຍາໄລໄບໂອລາເລີ່ມເດືອນໜຶ່ງປີໜ້າ, ເຖິງແມ່ນວ່າລາວຫາກໍເທດໄດ້ສາມຫາສີ່ເດືອນລາວກໍໄດ້ຮັບເຊີນໃຫ້ໄປເທດຢູ່ຕາມງານປະຊຸມພວກຂ່າວປະເສີດຕ່າງໆຢູ່ທາງເໜືອຂອງປະເທດອິນເດຍ,ສາທາລະນະລັດໂດມິນິກັນແລະທາງໃຕ້ຂອງປະເທດອິນເດຍ, ຂ້າພະເຈົ້າເຊື່ອວ່າລາວຈະເທດສະໜາໄປທົ່ວໂລກໃນຖານະເປັນໜຶ່ງໃນນັກປະກາດຂ່າວປະເສີດຜູ້ຍິ່ງໃຫຍ່ແຫ່ງສະຕະວັດທີ່ຊາວເອັດ, ຖ້າພວກທ່ານຢາກຈະອ່ານໜຶ່ງໃນບົດເທດຂອງຈອນຫຼືໂນອາຊອງກໍເຂົ້າໄປເບິ່ງຢູ່ເວັບໄຊຂອງພວກເຮົາ www.sermonsfortheworld.com,ຢູ່ທາງກາງໜ້າດໍາຈະມີປຸ່ມໜຶ່ງທີ່ເວົ້າວ່າ"ບົດເທດສະໜາໃນພາສາອັງກິດ" ຈິ່ງກົດບ່ອນນັ້ນແລ້ວທ່ານຈະເຫັນບົດເທດຕ່າງໆທີ່ເປັນພາສາຂອງທ່ານ,ຖ້າມີປຸ່ມກົດສໍາຫຼັບພາສາຂອງທ່ານຈິ່ງກົດປຸ່ມສໍາຫຼັບຄໍາເທດສະໜາຂອງດຣ.ໄຮເມີ ຫຼືໜຶ່ງໃນບົດເທດຂອງຈອນຊາມູເອວເຄແກນຫຼືຂອງໂນອາຊອງ ຫຼືຂອງນັກເທດຄົນອື່ນໆທີ່ເທດສະໜາຢູ່ຄຣິສຕະຈັກຂອງພວກເຮົາ, ຖ້າບໍ່ມີປຸ່ມກົດຢູ່ໃນໜ້າສໍາຫຼັບພາສາຂອງທ່ານກໍໃຫ້ເລື່ອນລົງມາຫາຕາຕະລ່າງແລ້ວທ່ານກໍຈະເຫັນບົດເທດຫຼາຍບົດທີ່ຈະຊ່ວຍທ່ານແລະເປັນພຣະພອນໃຫ້ກັບພວກທ່ານ.

ສິ່ງທີ່ຍິ່ງໃຫຍ່ທີ່ສຸດອັນທີ່ສອງທີ່ເກີດຂຶ້ນໃນປີນີ້ແມ່ນການເກີດຂອງຫຼານຄົນທໍາອິດຂອງພວກເຮົາຮັນນາຄິມ ໄຮເມີ, ນ້ອງຮັນນາເກີດໃນວັນທີ 30 ເດືອນມີນາເຊິ່ງເປັນລູກຂອງລູກຊາຍຂອງພວກເຮົາໂຣເບີດເລສລີໄຮເມີທີIII ກັບເມຍຂອງລາວຊື່ຈີນ, ນ້ອງຮັນນາເປັນເດັກທີ່ໜ້າຮັກຫຼາຍແລະສາມາດຍົກໂຕເອງຂຶ້ນໄດ້ແລະເກືອບຍ່າງຈັບຕຽງເດັກໄດ້ແລ້ວ.

ດັ່ງທີ່ຂ້າພະເຈົ້າໄດ້ເວົ້າແລ້ວວ່າຂ້າພະເຈົ້າໄດ້ພາເມຍຂອງຂ້າພະເຈົ້າເອລີນາ,ແມ່ລົບດາຂອງລາວພ້ອມກັບຈີນ,ເລສລີແລະເວສລີລົງໄປເມືອງແຄນຄັນເພື່ອໄປຫຼິ້ນຊາຍຫາດໃນເດືອນມັງກອນ, ພວກເຮົາມີເວລາທີ່ດີກັຫຼາຍເຖິງແມ່ນວ່າຂ້າພະເຈົ້າຈະບໍ່ຄ່ອຍສະບາຍປານໃດຈາກການປິ່ນປົວທີ່ຂ້າພະເຈົ້າມີຢູ່ສໍາຫຼັບໂລກມະເຮັງ,ເວົ້າອີກຢ່າງໜຶ່ງມະເຮັງຄືກັບຢູ່ໃຕ້ການຄວບຄຸມແລະບາງເທື່ອອາດຈະດີແລ້ວ,ມີພຽງເວລາທີ່ຈະບອກແຕ່ຂ້າພະເຈົ້າຫຼຸດນໍ້າໜັກ ໄດ້ 22 ປອນແລ້ວເຊິ່ງເປັນປະໂຫຍດຫຼາຍ.

ລັກສ່ອງເບິ່ງ"ລາຍການ"ຂອງສິ່ງຕ່າງໆທີ່ເກີດຂຶ້ນໃນປີນີ້, ໂຣສເຊນໍ-ຄວິນຕາຍໃນວັນທີ 13 ເດືອນກຸມພາຕອນອາຍຸໄດ້ 97 ປີ, ເດວິດຣັລສ໌ສັນ,ໂຣແລນ,ຣັສມັສສັນແລະແດນນີ້ໂທມັສໄດ້ເທດສະໜາແລະກຽມດົນຕີສໍາຫຼັບລະດູການອີສເຕີແລະສໍາຫຼັບວັນເກີດຄົບຮອບ 75 ປີຂອງຂ້າພະເຈົ້າໃນວັນທີ 12 ເມສາ, ຕາມດ້ວຍວັນເກີດເມຍຂອງຂ້າພະເຈົ້າໃນວັນທີ 16 ເມສາແລະພໍ່ຂອງລາວຣາຟາເອວຄູລາເຊິ່ງອາຍຸໄດ້ 85 ປີແລ້ວກໍບິນມາຢູ່ກັບພວກເຮົາສອງສາມມື້.

ຕໍ່ມາສິ່ງໃຫຍ່ທີ່ເກີດຂຶ້ນກໍຄືພຣະເຈົ້າໄດ້ສໍາແດງໃຫ້ຂ້າພະເຈົ້າເຫັນວ່າມັນເຖິງເວລາແລ້ວທີ່ຈະປ່ຽນແປງຄັ້ງໃຫຍ່ຢູ່ຄຣິສຕະຈັກຂອງເຮົາ, ພວກເຮົາໄດ້ເພີ່ມຄົນໜຸ່ມຜູ້ຊ່ວຍສາມຄົນເຂົ້າໄປຄືໂນອາຊອງ,ແຈັກແງັນແລະແອ ຣ໋ອນແຢນຊີ, ຈອນເຄແກນໄດ້ເທດສະໜາບົດເທດທໍາອິດຂອງລາວໃນວັນທີ 10 ເດືອນກໍລະກົດແລະໂນອາຊອງ ໄດ້ເທດໃນວັນທີ 17, ທັງສອງຄົນເປັນຄົນໜຸ່ມນັກເທດທີ່ເດັ່ນ-ເຫຼືອເຊື່ອ! ໃນວັນທີ 31 ເດືອນກໍລະກົດທີໂມທີແຊນກັບລາຣາເອສໂຄບາໄດ້ແຕ່ງດອງກັນ, ໃນວັນທີ 21 ເດືອນສິງຫາ ປີເຕີສະເຕເຟັນແງັນໄດ້ເກີດອອກມາ.

ສ່ວນທີ່ສອງຂອງການຟື້ນຟູເລີ່ມຂື້ນໃນວັນພະຫັດທີ 27 ເດືອນສິງຫາ, ພວກເຮົາໄດ້ຄົ້ນພົບຢູ່ກອງປະຊຸມຕ່າງໆເຫຼົ່ານີ້ວ່າເມື່ອເຮົາອະທິຖານດ້ວຍຄວາມລະວັງແລະຮັກສາຈິດວິນຍານແຫ່ງການອະທິຖານພຣະເຈົ້າກໍສະຖິດຢູ່ໃນການນະມັດສະການນັ້ນ, ມັນສະຫຼັບກັນເມື່ອພວກເຮົາບໍ່ໄດ້ແນ່ໃສ່ຄໍາອະທິຖານພຣະເຈົ້າກໍບໍ່ຢູ່ນໍາແລະບໍ່ມີອັນ ໃດເກີດຂື້ນ, ດັ່ງນັ້ນອັນນີ້ຈຶ່ງເປັນການຮຽນຮູ້ປະສົບການສໍາຫຼັບພວກເຮົາເຖິງແມ່ນຂ້າພະເຈົ້າຈະເຄີຍເຫັນການຟື້ນຟູໃຫຍ່ສາມອັນມາແລ້ວກໍຕາມ,ໜຶ່ງໃນນັ້ນໄດ້ນໍາປະມານສີ່ພັນຄົນເຂົ້າມາໃນຄຣິສຕະຈັກຄົນຈີນທີ່ຂ້າພະເຈົ້າເປັນສະມາຊິກຢູ່ນັ້ນ.

ດຣ.ນິລວິນເວີປະທານມະຫາວິທະຍາໄລແບັບຕິດແຫ່ງລຸຍເຊຍນາໄດ້ມາຮ່ວມງານປະຊຸມພຣະຄໍາພີກັບພວກເຮົາໃນວັນກໍາມະກອນ, ໃນວັນທີ 19 ເດືອນພະຈິກເວສລີ,ຄຣິສຕຽນຫງຽນ,ອາເດວລາເມັນຈີວາ,ເຊຊີໂກະຊາບາລາກະແລະເວີເຈວນິກເຄວໄດ້ຮັບບັບຕິດສະມາ, ໃນມື້ດຽວກັນຈອນຊາມູເອວເຄແກນໄດ້ຮັບໃບອະນຸຍາດໃຫ້ເທດສະໜາຂ່າວປະເສີດໂດຍຄຣິສຕະຈັກຂອງເຮົາ, ມື້ຕໍ່ມາພວກເຮົາກໍມີງານລ້ຽງວັນຂອບຄຸນພຣະເຈົ້າກັບຮອນຄລາກທີ່ຫຼີ້ນໄວໂອລິນແລະກັອຟເມີຣີລໄດ້ຫຼີ້ນເປຍໂນ, ຊ່າງເປັນເວລາທີ່ພິເສດ! ເດບຊຸກສຸດທ້າຍກໍກໍາລັງຈະກັບມາຮ້ອງເພງຂ່າວປະເສີດແນວຄັນທຣີກັບເວສເທີນສໍາຫຼັບພວກເຮົາໃນງານລ້ຽງວັນຄຣິສມາດເດືອນທັນວາທີ 18.

ພຣະເຈົ້າໄດ້ເປີດປະຕູໃຫ້ພວກເຮົາທີ່ຈະເພີ່ມພາສາທີ່ 34 ຄືພາສາເນປານ, ຜູ້ຄົນຊາວເນປານຕອນນີ້ສາມາດອ່ານບົດເທດຂອງຂ້າພະເຈົ້າທຸກໆອາທິດໄດ້, ປະເທດເນປານເປັນສະຖານທີ່ມີຄວາມຈໍາເປັນ,ມີແຜ່ນດິນໄຫວສອງເທື່ອປີກາຍນີ້, ແລະພວກເຮົາດີໃຈຫຼາຍທີ່ມີໂອກາດໄດ້ຕື່ມພາສາຂອງປະເທດນ້ອຍໆທີ່ຕັ້ງຢູ່ເລິກເຂົ້າໄປໃນພູຫິມະໄລຕື່ມໃສ່ລາຍການພາສາຕ່າງໆຂອງເຮົາ, ບົດເທດເກືອບທຸກອັນຂອງຂ້າພະເຈົ້າຕອນນີ້ໄດ້ຖືກແປເປັນ 34 ພາສາໃນຮູບແບບຕົ້ນສະບັບນັ້ນໆ, ບົດເທດທຸກອັນໄດ້ຖືກບັນທຶກດ້ວຍເຄື່ອງມືກ້ອງທີວີຄຸນນະພາບສູງແລະອອກອາກາດໄປທົ່ວໂລກທາງຢູທູບແລະເວັບໄຊຂອງພວກເຮົາໃນສາມພາສາຄືພາສາຈີນກາງ,ພາສາສະເປນແລະອັງກິດ.

ຂ້າພະເຈົ້າບໍ່ຢາກຍອມຮັບມັນແຕ່ຂ້າພະເຈົ້າກໍາລັງເຖົ້າລົງເລື່ອຍໆ, ຂ້າພະເຈົ້າບໍ່ສາມາດຫຼີ້ນກິລາເບສບອລແບບທີ່ເຄີຍຫຼີ້ນໄດ້ເຊິ່ງຫຼີ້ນບໍ່ໄດ້ອີກແລ້ວ,ດັ່ງນັ້ນຂ້າພະເຈົ້າຈຶ່ງຫຼຸດນໍ້າໜັກບໍ່ໄດ້ຫຼາຍ! ນັ້ນແລະຄືສິ່ງທີ່ຂ້າພະເຈົ້າຄິດຮອດຫຼາຍກວ່າໝູ່!!! ເມຍຂອງຂ້າພະເຈົ້າມີເກືອບທຸກຄົນໃນຄຣິສຕະຈັກທີ່ບໍ່ມີບ່ອນໄປສໍາຫຼັບອາຫານແລງວັນຂອບຄຸນພຣະເຈົ້າ, ພວກເຮົາມັກຈະມີເວລາທີ່ດີກັບໂອກາດແບບນີ້ຕະຫຼອດ.

ມັນເປັນຄວາມຫວັງຂອງພວກເຮົາວ່າພຣະຄຣິດຈະຖືກເປີດເຜີຍຢູ່ໃນບ້ານຂອງທ່ານ ແລະ ຢູ່ໃນຊີວິດຂອງທ່ານໃນຊ່ວງເທດສະການວັນຄຣິສມາດທີ່ສວຍງາມນີ້.



ດຣ.ໄຮເມີກັບເອລີນາພ້ອມກັບຫຼານສາວຮັນນາຕອນອາຍຸໄດ້ສີ່ຊົ່ວໂມງ

ດ້ວຍຄວາມເຄົາລົບໃນນາມຂອງພຣະເຢຊູ

ດຣ.ອາແອວໄຮເມີຈູເນຍ
ຟີລິບປອຍ 4:13

*ບັກເທດທຸກຄົນຈະຕິດຂັດສໍາຫຼັບຄໍາເທດສະໜາເທື່ອໜຶ່ງໃນຊ່ວງໜຶ່ງ, ຈົ່ງເຊັກເບິ່ງວ່າຄໍາເທດສະໜາຂອງຂ້າພະເຈົ້າສາມາດຊ່ວຍອັນໃດທ່ານແດ່ບໍ,ນັ້ນແລະຄືເຫດຜົນທີ່ ມັນຢູ່ທັ້ນ, ບັກເທດປະມານ 120,000 ຄົນຢູ່ໃນ 216 ປະເທດພາກັນອ່ານບົດເທດຂອງຂ້າພະເຈົ້າແລະໄດ້ຮັບການຊ່ວຍເຫຼືອຈາກມັນໃນປີນີ້,ເຊີນໄປເບິ່ງຢູ່ເວັບໄຊ*
***WWW.SERMONSFORTHEWORLD.COM***



ດຣ.ໄຮເມີກັບຈອນຊາມູເອວເຄແກນ(ຊ້າຍ)ແລະ
ໂນອາຊອງ(ຂວາ),ທັງສອງໄດ້ຖະວາຍຕົວທີ່ຈະ
ເທດສະໜາຂ່າວປະເສີດແລະຮຽນພຣະຄຳພີ.




ດຣ.ໄຮເມີກັບຈອນເຄແກນຕອນທີ່ລາວໄດ້
ຮັບໃບອະນຸຍາດຮັບໃຊ້ຂ່າວປະເສີດ



ອະເດລາເມັນຈີວາຮັບບັບຕິດສະມາຕອນ
ອາຍຸ 87 ປີໂດຍດຣ.ໄຮເມີ



ດຣ.ໄຮເມີໃຫ້ເວີເຈວນິກເຄວຮັບບັບຕິດສະມາ



ດຣ.ໄຮເມີກັບເມຍຄົບຮອບວັນແຕ່ງງານ 34 ປີ



ຣາຟາເອວຕູລາ(ຊ້າຍ), ເລສລີໄຮເມີ, ຈີນໄຮເມີ,
ດຣ.ໄຮເມີ,ເມຍດຣ.ໄຮເມີກັບຮັນນາ,ຈອນນີ້ຄິມກັບເມຍ

***ເຂົ້າເບິ່ງເວັບໄຊຄຣິສຕະຈັກຂອງເຮົາທີ່ WWW.BAPTISTTABERNACLE.COM***
***ເວັບໄຊຄຳເທດສະໜາຂອງເຮົານຳສະເໜີບົດເທດສະໜາຫຼາຍຮ້ອຍເລື່ອງໃນສາມສິບສີ່ພາສາ***
***ທີ່ WWW.SERMONSFORTHEWORLD.COM***



ເຈມຮູບກັບເມຍ, ນາງເປັນຄົນຫຼິ້ນອໍແກນຂອງໂບດ



ດຣ.ໄຮເມີກັບນາງໂຣສເຊນໍຄວິນ



ສາສະດາຈານມາກບັກລີກັບດຣ.ໄຮເມີພ້ອມດ້ວຍ
ພັນລະຍາຂອງເພິ່ນໃນວັນປີໃໝ່



ດຣ.ແຊນກຳລັງປະກອບພິທີງານແຕ່ງຂອງລູກຊາຍ
ເພິ່ນຊື່ທີໂມທີ ກັບ ລໍຣາເອສໂຄບາ



ດຣ.ໄຮເມີກັບພັນລະຍາແລະແມ່ຂອງເມຍດຣ.ໄຮເມີ
ລິນດາ, ເລສລີ,ເວສລີແລະຈິນໄຮເມີ



(ຈາກຊ້າຍຫາຂວາ)ດຣ.ໄຮເມີກັບນ້ອງຮັນນາ,ພັນລະ
ຍາດຣ.ໄຮເມີ, ເລສລີແລະຈິນໄຮເມີ.

*ເຂົ້າເບິ່ງເວັບໄຊຄຣິສຕະຈັກຂອງເຮົາທີ່ **WWW.BAPTISTTABERNACLE.COM***
*ເວັບໄຊຄຳເທດສະໜາຂອງເຮົານຳສະເໜີບົດເທດສະໜາຫຼາຍຮ້ອຍເລື່ອງໃນສາມສິບສີ່ພາສາ*
*ທີ່ **WWW.SERMONSFORTHEWORLD.COM***